# ຍຸກຄຳ ຂອງ ວັນນະຄະດີລາວ 9

## ມະຫາ ບຸນຍົກ ແສນສຸນທອນ

ວັນນະຄະດີລາວ ມີມາແຕ່ກ່ອນລາວນຳເອົາພຸດທະສາດສະໜາ ເຂົ້າມາເຜີຍແຜ່ຢູ່ປະເທດລາວ ເປັນເວລາດົນນານ. ບັນດານັກປາດລາວແຕ່ກ່ອນ ບໍ່ມີໃຜຮູ້ວ່າເກີດຂຶ້ນໄດ້ຢ່າງໃດ ໃຜເປັນຜູ້ປະດິດຄິດແຕ່ງຂຶ້ນ

ແຕ່ໃນສະໄໝປັດຈຸບັນ ມີນັກປາດລາວຫລາຍຄົນ ພາກັນຄິດຊອກຄົ້ນຫາຫລັກຖານການເປັນມາຂອງວັນນະຄະດີລາວ, ໂດຍສະເພາະແມ່ນ ອາຈານມະຫາສິລາ ວິຣະວົງສ໌ ນັກປາດຄົນສຳຄັນຄົນນຶ່ງໃນຍຸກປັດຈຸບັນ ເພິ່ນໄດ້ຄົ້ນຢ່າງຈິງຈັງ ພ້ອມດ້ວຍເພື່ອນຮຸ່ນດຽວ ຂອງເພິ່ນ ໂດຍຊອກຄົ້ນຄຳພີດີກາຕ່າງໆທີ່ມີອາຍຸໃນສະໄໝປະຫວັດສາດ ແລະ ກ່ອນປະຫວັດສາດ

ໃນທີ່ສຸດເພິ່ນລົງຄວາມເຫັນວ່າ ວັນນະຄະດີລາວໃນສະໄໝກ່ອນປະຫວັດສາດ ແມ່ນ ກອນຜຍາ, ກອນຜຍາແມ່ນຄຳກອນປະເພດນຶ່ງ ໃນຈຳພວກກອນອ່ານ ແລະກອນລຳ ແຕ່ເປັນບົດສັ້ນໆ ບໍ່ເປັນເລື່ອງຍາວ ກອນຜຍາເປັນຄຳປະພັນທີ່ພວກບ່າວສາວຄຶດຂຶ້ນເວົ້າແກ້ກັນ ໃນທັນທີທັນໃດ ໂດຍປຽບທຽບເອົາສັດ ຕົ້ນໄມ້ພູຜາປ່າດົງມາໃສ່ ຫລື ເປັນຄຳສຸພາສິດ ກ່າວຕຸກເຕືອນໃຈໃຫ້ມີແນວຄິດ ຄຶດເຫັນເອົາເອງຕາມຄວາມຄ່ອງແຄ້ວ ແລະ ສະຕິປັນຍາຂອງໃຜລາວ ດັ່ງນີ້ ຈຶ່ງເອີ້ນວ່າກອນຜຍາ ຄືມາຈາກປັນຍາ ຫລືປຣັດຊະຍາ ນັ້ນເອງ ກອນຜຍານີ້ແລ ເປັນຫລັກເປັນເຄົ້າຂອງວັນນະຄະດີລາວ ໃນປະເພດຄຳກອນຂອງລາວແທ້ ໃນກ່ອນປະຫວັດສາດ ວັນນະຄະດີລາວ ບໍ່ແມ່ນໄດ້ແບບຢ່າງມາຈາກຊາດອື່ນ ແລະ ພາສາອື່ນ ເພາະຕາມການສັງເກດຂອງນັກປາດລາວຫລາຍທ່ານ ໂດຍມີ ທ່ານອາຈານມະຫາສິລາ ເປັນເຄົ້າ ໄດ້ກ່າວໄວ້ວ່າ ຄຳຜຍາລາວ ກ່ອນປະຫວັດສາດ ເປັນຄຳພາສາລາວລ້ວນໆ ບໍ່ມີພາສາອື່ນມາປົນຈັກຄຳ ແລະ ຄຳຜຍາສ່ວນຫລາຍແມ່ນເອົາສັດ ປ່າໄມ້ ພູຜາ ແລະ ທຳມະຊາດຕ່າງໆ ມາສົມທຽບ ຍົກຕົວຢ່າງ :

| | |
|---|---|
| ນົກເອົາໄຂ່ | ຍັງເອົາແກ້ມກ່າຍຄອນ |
| ນົກເອົາບອນ | ຍັງເອົາແກ້ມກ່າຍໄມ້ |
| ບາດວ່ານ້ອງນັ່ງໄຫ້ | ຊິເອົາແກ້ມກ່າຍໃຜ |

ນົກເອົາຕູ້ ພາກຄູ່ກໍຍັງອັບ
ກາເວົາວອນ ພາກຄອນກໍຍັງຮ້ອງ
ບາດວ່ານ້ອງພາກອ້າຍ ຄວາມດຽວບໍ່ເອີ້ນສັ່ງ
ຕັ້ງແຕ່ໄມ້ໃຫຍ່ລົ້ມ ກໍຍັງເອີ້ນສັ່ງຕໍ

ຫີນແຜ່ນລ້ານ ກ້ອນໃຫຍ່ຄືຊິໜັກ
ບາດວ່າເອົາຊະໂນຕິດ ຊົ່ງຊາສັງມາໄດ້
ຄັນແມ່ນຕາມຕາຄື້ວ ຄືຊະໂນຊິໜັກກວ່າ
ຄັນແມ່ນຕາບໍ່ຄື້ວ ຊິເບົາເບື້ອງຝ່າຍຊະໂນ

ຫົນທາງຮົກ ອ້າຍຍັງວ່າຊິຖາງ
ຫົນທາງບາງ ອ້າຍຍັງວ່າຊິແຕ່ງ
ບາດວ່ານ້ຳແກ່ງຖ້ວມ ຊິຈຳນ້ອງຊ່ວງເຮືອ ຊັ້ນບໍ

ຄຳຜຍາ ຫລືຄຳກອນ ທີ່ບໍ່ມີພາສາອື່ນປົນຄືແບບນີ້ ນັກປາດລາວເຮົາສັນນິດຖານວ່າ ເປັນຄຳກອນທີ່ມີມາກ່ອນປະຫວັດສາດ ສ່ວນຄຳກອນທີ່ມີມາໃນສະໄໝປະຫວັດສາດນັ້ນ ແມ່ນມີພາສາປາລີ ສັນສະກຣິດ ຂເມນປົນຢູ່ຢ່າງຫລວງຫລາຍ

## ວັນນະຄະດີລາວໃນສະໄໝປະຫວັດສາດ

ຕົ້ນສັດຕະວັດທີ 16 ຄືຕັ້ງແຕ່ ຄສ. 1500 ຫາ 1520 ນີ້ ແມ່ນຣາຊະການພະເຈົ້າວິຊຸນນະລາດ ໃນຣາຊະການນີ້ພະສົງເຖຣະຂອງລາວ ຮຽນຈົບພະໄຕປິດົກຂອງພຸດທະສາສະໜາມີຫລາຍອົງ ນັກປາດບັນດິດກໍມີຫລາຍພະພຸດທະສາສະໜາກໍຮຸ່ງເຮືອງເຫລືອງເຫລື້ອມ ພະເຈົ້າວິຊຸນນະລາດກໍຕັ້ງໃຈທະນຸບຳລຸງພະສາສະໜາຄຳພີປັນຈະຕັນຕະຣະ ອັນເປັນຄຳພີສຳຄັນ ແລະ ເປັນພາສາສັນສະກຣິດນັ້ນ ສົມເດັດພະສັງຄະຣາຊາວິຊຸນລະມະຫາຣາຊາທີບໍດີສີສັດຕະນາຄະນະຫຸດ ເປັນຜູ້ແປອອກມາເປັນພາສາລາວ ແບບກອນກະວີ ຄືວິທີແຕ່ງກາບວິດຊຸມາລີ ຫລືໂຄງສີ່ສຸພາບນັ້ນ ໄດ້ຈະເຣີນແຜ່ຫລາຍຕັ້ງແຕ່ສະໄໝນີ້ເປັນຕົ້ນມາ ຣິດສິບສອງຄອງສິບສີ່ ກໍແມ່ນແຕ່ງຂຶ້ນໃນສະໄໝນີ້, ຜູ້ແຕ່ງກໍແມ່ນ ພະຄູມະຫາເທພຫລວງ ອົງເປັນພະທັມມະເສນາ (ຕຳແໜ່ງສັງຄະຣາດ) ແລະ ພະມະຫາມຸງຄຸນສິດທິ ສອງພີ່ນ້ອງນີ້ ຮຽນຈົບພະໄຕປິດົກ ແລະ ແຕກສານ

ທາງດ້ານວັນນະຄະດີອິນເດັຽ ທັງສອງອົງນີ້ ສາມາດຄັດລອກເອົາແບບຢ່າງສັນທະກະວີຂອງອິນເດັຽ ມາແປງເປັນກາບກອນໂຄງສານຂອງລາວ ພ້ອມທັງຮີດສິບສອງຄອງສິບສີ່ ແລະ ກາບ ກອນ ໂຄງ ສານ ນີ້ ທັງອຳນາດການປົກຄອງບ້ານເມືອງ ແລະອຳນາດການປົກຄອງສົງ ໄດ້ມີຄຳສັ່ງໃນທົ່ວປະເທດ ໃຫ້ພະສົງລາວ ໃນທົ່ວປະເທດ ທາງໃຕ້ຕັ້ງແຕ່ລີ່ຜີຂຶ້ນມາ ທາງເໜືອແຕ່ຜາໄດຜາດ່າງລົງມາ ໃຫ້ພາກັນໄປຮຽນເອົາຢູ່ເມືອງ ຊຽງດົງຊຽງທອງພຸ້ນ ເມື່ອຮຽນໄດ້ຄ່ອງແຄ້ວແລ້ວ ກໍໃຫ້ກັບເມືອຖິ່ນຖານຂອງໃຜລາວ ແລະ ໃຫ້ເມືອສິດສອນ ລູກສິດຂອງຕົນ ແລະ ໃຫ້ເຜີຍແຜ່ແກ່ອອກຕົນຍາດໂຍມໃນທ້ອງຖິ່ນຂອງຕົນຈົນສຸດຄວາມສາມາດ (ຄັດຈາກ ລານກ້ອມຂາດຫຼາຍ ຢູ່ວັດວິຊຸນນະລາດ)

ຕົກມາໃນຣາຊະການພະໂພທິສາຣະຣາດ ຄສ. 1520 ເຖິງ ຄສ. 1550 ພະອົງໄດ້ສືບຕໍ່ເຜີຍແຜ່ ຮີດສິບສອງ ຄອງສິບສີ່ ແລະ ແປຕຳລາຕ່າງໆ ທີ່ເປັນພາສາປາລີ ແລະ ພາສາ ສັນສະກຣິດ ພາສາຂອມ ອອກມາສິດສອນຊາວພຸດທະບໍລິສັດຢ່າງກວ້າງຂວາງ ໂດຍແມ່ນ ພະມະຫາສັດທາທິໂກ ເປັນອົງສຳຄັນ (ຄັດຈາກລານກ້ອມບ້ານສົງ ແຂວງຫລວງພະບາງ) ໃນສະໄໝນີ້ ກາບກອນໂຄງສານໄດ້ເກີດຂຶ້ນຢ່າງຟົດຟື້ນ ປະຊາຊົນລົມກັນ ຫລືບ່າວສາວລົມກັນ ກໍລົມເປັນກາບກອນໂຄງສານ ຜູ້ຈະເຂົ້າໄປເຝົ້າພະເຈົ້າຊີວິດ ກໍຕ້ອງ ໄດ້ລົມກັບນາຍປະຕູພະລາຊະວັງເປັນກາບກອນໂຄງສານ ຖ້າບໍ່ລົມແບບນັ້ນ ກໍບໍ່ໄດ້ເຂົ້າເຝົ້າ. ນີ້ໝາຍ ຄວາມວ່າ ການເຜີຍແຜ່ວັນນະຄະດີ ແລະ ຮີດຄອງປະເພນີ ແມ່ນເຮັດຢ່າງເອົາຈິງເອົາຈັງ

ດັ່ງນັ້ນ ວັນນະຄະດີລາວ ຈຶ່ງໄດ້ແຜ່ຜາຍຂະຫຍາຍອອກໃນທົ່ວປະເທດຢ່າງກວ້າງຂວາງ ຕັ້ງແຕ່ ນັ້ນມາ ປະຊາຊົນລາວກໍສືບຕໍ່ເຜີຍແຜ່ກັນມາໂດຍຕະຫລອດ ພະເຖຣະຜູ້ມີພອນສະຫວັນ ທາງດ້ານວັນນະຄະດີ (ກາບ ກອນ ໂຄງ ສານ) ກໍພາກັນຕັ້ງໜ້າສິດສອນ ແກ່ອອກຕົນຍາດໂຍມ ຕິດຕໍ່ກັນມາຢ່າງບໍ່ຂາດສາຍ, ຈົນມາເຖິງສັຕຕະວັດທີ 17 ຄສ 1638 ພະເຈົ້າສຸຣິຍະວົງສາ ຂຶ້ນຄອງຣາຊະສົມບັດ ພະອົງໄດ້ຕັ້ງໜ້າ ຢ່າງຈິງຈັງ ເພື່ອເຜີຍແຜ່ສິລະປະວັນນະຄະດີ ແລະ ຮີດຄອງປະເພນີ ສົ່ງເສີມການສຶກສາໂດຍເອົາວັດເປັນ ໂຮງຮຽນ ເອົາວັດເປັນທີ່ພັກ ເອົາວັດເປັນໂຮງໝໍ ... ປຸກລະດົມໃຫ້ຄົນເຂົ້າບວດຈົນຖືກັນເປັນຮີດວ່າ ຊາຍໜຸ່ມ ຖ້າຜູ້ໃດບໍ່ບວດ ຖືວ່າເປັນຄົນດິບ ເປັນຄົນໂງ່ຈ້າຫລ້າຫລັງ ບໍ່ເປັນທີ່ຮັກຂອງຍິງສາວ, ຜູ້ໃດໄດ້ບວດຖືວ່າ ເປັນຄົນສຸກ ເປັນຄົນສລາດຫລັກແຫລມ ຍ່ອມເປັນທີ່ຮັກຂອງຄົນທັງຫລາຍ. ດັ່ງນັ້ນ ໃນສັດຕະວັດທີ 16-17 ນີ້ ປະເທດລາວເກີດມີນັກປາດບັນດິດຂຶ້ນຢ່າງຫລວງຫລາຍ ໃນທົ່ວປະເທດ ມີນັກຮ້ອງ ນັກລຳ ຄູອາຈານສອນ ດ້ານນີ້ເກືອບວ່າມີທຸກໝູ່ບ້ານ, ຄຳພີຊາດົກຕ່າງໆ ມີນັກປາດແປຈາກພາສາປາລີສັນສະກຣິດ ມາເປັນ ກາບ ກອນ ຕ່າງໆ ເປັນອັນມາກ

ຄຳກອນເລື່ອງ ສັງສິນໄຊ, ແຕງອ່ອນ, ກາລະເກດ, ພະເກດສຸຣິຍົງຍານ, ຈຳປາສີ່ຕົ້ນ, ທ້າວສຸຣິວົງ ແລະອື່ນໆ ກໍເຊື່ອວ່າເກີດຂຶ້ນໃນສັດຕະວັດທີ 16-17 ນີ້. ເຮົາຈະເອີ້ນຍຸກນີ້ວ່າ ເປັນຍຸກຄຳຂອງວັນນະຄະດີລາວ ກໍວ່າໄດ້ຢ່າງບໍ່ຜິດ ເພາະວ່າການປຸກລະດົມຂົນຂວາຍ ດ້ານວັນນະຄະດີໃນຍຸກນີ້ ລົງເຖິງປະຊາຊົນຊາວພຸດ ທຸກໆບ້ານແທ້. ປະຊາຊົນຊາວພຸດລາວ ຖືກັນເປັນຮີດວ່າ ມີບ້ານຕ້ອງມີວັດ ເພາະວັດເປັນໂຮງຮຽນ ເປັນທຸກຢ່າງຂອງຊີວິດຊາວພຸດລາວ

ຕອນຂ້າພະເຈົ້າຍັງເປັນຈົວນ້ອຍ ໄດ້ຈື່ສຳນັກຮຽນ ແລະ ໄດ້ໄປຮຽນແຕ່ງກາບ ກອນ ນຳອາຈານ ເຊັ່ນ ຢູ່ວັດໂຂງພະໃຫຍ່ ເມືອງໂຂງ ມີອາຈານໃຫຍ່ອົງນຶ່ງເປັນຜູ້ມີຊື່ສຽງທາງດ້ານວັນນະຄະດີເປັນເລີດ ຄືທ່ານ ມະຫາທິລາດ ທ່ານເປັນອາຈານສອນລຳ ໃຫ້ແກ່ໝໍລຳທັງຊາຍ ແລະ ຍິງ ໝໍລຳບໍ່ວ່າຊາຍ ຫລືຍິງ ຄັນອອກຈາກສຳນັກນີ້ຖືວ່າເກັ່ງຫລາຍ ຄືເກັ່ງທັງການແຕ່ງກາບ ກອນ ຢູ່ທາງເຂດຈຳປາສັກໃນເວລານັ້ນ ກໍແມ່ນສຳນັກນີ້ ເປັນສຳນັກທີ່ໂດ່ງດັງທາງດ້ານການແຕ່ງ ແລະ ການລຳຫລາຍ

ອີກສຳນັກນຶ່ງຢູ່ແຂວງຈຳປາສັກ ກໍແມ່ນສຳນັກວັດທ່າແຮ່ ເມືອງມູນລະປາໂມກ ໂດຍແມ່ນຍາທ່ານ ມະຫາເຄນທະນາກອນ ເປັນຜູ້ສອນ ທັງການລຳ ການແຕ່ງ ຂ້າພະເຈົ້າກໍໄດ້ໄປຮຽນແຕ່ງນຳເພິ່ນ ໃນສະໄໝ ຍັງເປັນຈົວ ແລະ ໄດ້ລົ້ງແກ່ນ ໂຄຣົບນັບຖືເພິ່ນຫລາຍ

ອີກສຳນັກນຶ່ງ ແມ່ນວັດບ້ານສມັນ ສັກເມືອງ ເມືອງໂພນທອງ ໂດຍແມ່ນຍາທ່ານພະຄູປຸ້ຍ ຫລານ ສົມເດັດລຸນ ວັດເວີນໄຊ ຍາທ່ານອົງນີ້ເກັ່ງທັງດ້ານເວດມົນຄາຖາ ທາງດ້ານການແຕ່ງກາບ ກອນ ແລະ ສິດສອນໃຫ້ລູກຫລານຂອງທ່ານຈົນໝົດຊີວິດ

ທັງສາມຍາທ່ານ ແລະ ສາມສຳນັກທີ່ກ່າວມານີ້ ໄດ້ເພີດໄປພ້ອມໆກັບທ່ານໄດ້ໝົດຊີວິດແລ້ວ ບໍ່ມີຜູ້ ສືບທອດຕໍ່ມາອີກເລີຍ ຄືເພີດໄປປະມານ 40 ປີປາຍມານີ້ ຍັງເຫລືອແຕ່ລູກສິດທີ່ເປັນໝໍລຳ ຍັງລຳຢູ່ເທົ່າ ທຸກວັນນີ້ ສ່ວນສຳນັກຮຽນແຕ່ງຮຽນລຳຄືແຕ່ກ່ອນນັ້ນ ບໍ່ມີແລ້ວ

ຂ້າພະເຈົ້າສະຫລຸບໄດ້ວ່າ ສິລະປະວັນນະຄະດີທີ່ເຄີຍເລີ່ມຕົ້ນ ມາແຕ່ສັດຕະວັດທີ 15 ມາຈະເລີນ ຮຸ່ງເຮືອງໃນສັດຕະວັດທີ 16-17 ນັ້ນ ແມ່ນພະສົງເປັນຜູ້ປະດິດແຕ່ງຂຶ້ນ. ອຳນາດການປົກຄອງບ້ານເມືອງ ເປັນຜູ້ສະໜັບສະໜູນຢ່າງຈິງຈັງ ພະສົງຜູ້ມີພອນສະຫວັນທາງດ້ານນີ້ ເປັນຜູ້ເຜີຍແຜ່ຕັ້ງແຕ່ຕົວເມືອງຈົນເຖິງ ຊົນນະບົດໃນທົ່ວປະເທດ ແລະ ປະຊາຊົນຊາວພຸດລາວໃນທົ່ວປະເທດ ເປັນຜູ້ປົກປັກຮັກສາຕະຫລອດມາ ຈົນເຖິງເທົ່າທຸກວັນນີ້

ຜູ້ຊົມໃຊ້ວັນນະຄະດີ ຍ່ອມມີຄວາມຊື່ນໃຈ ເບີກບານໃຈ ມີຄວາມສຸກທາງໃຈ ໃນທາງພຸດທະສາສນາ ເວົ້າວ່າ ວັນນະຄະດີແມ່ນອາຫານແນວນຶ່ງທີ່ທຸກຄົນຄວນໄດ້ກິນທຸກມື້ ຂາດມື້ນຶ່ງບໍ່ໄດ້ນັ້ນ ຄືມັນເປັນມະໂນສັນ ເຈຕະນາຫານ ແປວ່າ ອາຫານທາງໃຈ ບຸກຄົນໃດບໍ່ມີຈິດໃຈມ່ວນຊື່ນເບີກບານ ບຸກຄົນນັ້ນເພິ່ນວ່າຂາດ ມະໂນສັນເຈຕະນາຫານ. ແຕ່ຖ້າວັນນະຄະດີໃດ ຫາກສ່ອງແສງສັງຄົມໃນຊາດ ວັນນະຄະດີນັ້ນຍ່ອມ :

1. ສາມາດປ້ອງກັນການກືນຊາດໄດ້ດີທີ່ສຸດ
2. ເຮັດໃຫ້ເກີດການສົມສ່ວນ ໃນການປົກປັກຮັກສາເອກະລາດຂອງຊາດ
3. ເປັນພື້ນຖານແຫ່ງການພັດທະນາປະເທດ ໃນທຸກຂົງເຂດວຽກງານ
4. ເປັນປັດໄຈສຳຄັນ ແຫ່ງຄວາມສງົບສຸກຂອງພົນລະເມືອງ
5. ເປັນເຄື່ອງສະແດງເຖິງຄວາມຈະເລີນຂອງຊາດ

ດ້ວຍເຫດນີ້ ພວກເຮົາຈຶ່ງຖືວັນນະຄະດີ ເປັນສົມບັດອັນລ້ຳຄ່າຂອງຊາດຢ່າງນຶ່ງ. ແຕ່ເປັນສົມບັດທີ່ ມອບໃຫ້ທຸກຄົນໃນຊາດ ຊ່ວຍກັນປົກປັກຮັກສາ.